ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.LA

ເລກທີ. 0413 /ສວນ/2026
ນະຄອນຫຼວງວຽງຈັນ, ວັນທີ 10 ເມສາ 2026

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ທີ່ນັບຖື.

ເລື່ອງ: ການແຈ້ງມະຕິ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025.

- ອີງຕາມຂໍ້ຕົກລົງ ຂອງຄະນະກຳມະການຄຸ້ມຄ້ອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດ ຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.
- ອີງຕາມລະບຽບ ຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເປີຍຂໍ້ມູນ ເລກທີ 33/ຕລຊລ ລົງວັນທີ 27 ກັນຍາ 2018.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ເມື່ອວັນທີ 10 ເມສາ 2026 ເວລາ 14:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ (ຕລຊລ), ບ້ານ ໂພນທັນ ໝໍ້ອ, ຖະໜົນ T4, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ **48** ທ່ານ, ແບ່ງເປັນຜູ້ຖືຮຸ້ນ ທີ່ເຂົ້າຮ່ວມປະຊຸມດ້ວຍຕົນເອງ ຈຳນວນ **27** ທ່ານ ແລະ ຜູ້ຖືຮຸ້ນ ທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ **21** ທ່ານ ຖືຮຸ້ນລວມ **145,750,300** ຮຸ້ນ ຄິດເປັນ **88.33 %** ຂອງຈຳນວນຮຸ້ນທັງໝົດ ຂອງບໍລິສັດ ໂດຍທີ່ປະຊຸມໄດ້ມີມະຕິດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງ ບົດລາຍງານບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024;

ກອງປະຊຸມໄດ້ລົງມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ **145,750,300** ສຽງ ຄິດເປັນ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ **145,750,300** ສຽງ ຄິດເປັນ 100 %

2. ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2025 ແລະ ບົດລາຍງານການເງິນ ຂອງບໍລິສັດ ປະຈຳປີ 2025;

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ **145,750,300** ສຽງ ຄິດເປັນ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ **145,750,300** ສຽງ ຄິດເປັນ 100 %

3. ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2026;

ກອງປະຊຸມໄດ້ລົງມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ **145,750,300** ສຽງ ຄິດເປັນ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີ **0** ສຽງ ຄິດເປັນ 0 %
- ລວມ **145,750,300** ສຽງ ຄິດເປັນ 100 %

4. ພິຈາລະນາ ແລະ ອະນຸມັດ ການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2025;

ກອງປະຊຸມໄດ້ລົງມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ **145,750,300** ສຽງ ຄິດເປັນ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີ **0** ສຽງ ຄິດເປັນ 0 %
- ລວມ **145,750,300** ສຽງ ຄິດເປັນ 100 %

5. ພິຈາລະນາ ແລະ ອະນຸມັດ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດ ຄ່າບໍລິການກວດສອບບັນຊີ ຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2026;

ກອງປະຊຸມໄດ້ລົງມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ **145,750,300** ສຽງ ຄິດເປັນ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ
- ບໍ່ເຫັນດີ **0** ສຽງ ຄິດເປັນ 0 %
- ລວມ **145,750,300** ສຽງ ຄິດເປັນ 100 %

ທີ່ປະຊຸມຜູ້ຖືຮຸ້ນ ບໍ່ມີຂໍ້ພິຈາລະນາອື່ນໆ ສະນັ້ນ, ປະທານ ຈຶ່ງກ່າວປິດກອງປະຊຸມ ເວລາ 16:00 ໂມງ ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖື
ປະທານສະພາບໍລິຫານ
ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ທ່ານ ສົມຈິດ ອິນທະມິດ